ບໍລິສັດ ຊິມັ້ງລາວ ມະຫາຊົນ

ເອກະສານລາຍງານການເງິນ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

EY
Building a better working world

ບໍລິສັດ ຊິມັ້ງລາວ ມະຫາຊົນ

ເອກະສານລາຍງານການເງິນ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

ບໍລິສັດ ຊິມັ້ງລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 2
ບົດລາຍງານຂອງຄະນະບໍລິຫານ	3
ບົດລາຍງານຂອງນັກກວດສອບອິດສະຫຼະ	4 - 7
ໃບລາຍງານຖານະການເງິນ	8 - 9
ໃບລາຍງານຜົນການດຳເນີນງານ	10
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ	11
ໃບລາຍງານກະແສເງິນສົດ	12
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ	13 - 30

ບໍລິສັດ ຊິມັງລາວ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ຊິມັງລາວ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນ ບໍລິສັດ ຊິມັງລາວ ຈຳກັດ ຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນຂອງບໍລິສັດທີ່ເຊັນຮັບຮອງ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 15 ທັນວາ 1998 ລະຫວ່າງ ລັດວິສາຫະກິດພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI) ("ຝ່າຍ ກ") ກັບ ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ (CYC) ("ຝ່າຍ ຂ").

ວັນທີ 6 ທັນວາ 1999, ບໍລິສັດໄດ້ຮັບໃບທະບຽນຄັ້ງທຳອິດເລກທີ 1154/ຈທກ ອອກໂດຍ ກະຊວງອຸດສະຫະກຳ ແລະ ການຄ້າ, ເຊິ່ງບໍລິສັດໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບຊີມັງ ແລະ ຜະລິດຕະພັນຕ່າງໆທີ່ກ່ຽວຂ້ອງກັບຊີມັງເພື່ອການຈຳໜ່າຍພາຍໃນ ແລະ ສົ່ງອອກ.

ບໍລິສັດໄດ້ມີການປັບປຸງໃບທະບຽນວິສາຫະກິດດັ່ງລຸ່ມນີ້:

ໃບທະບຽນວິສາຫະກິດ	*ວັນທີ*
0078/ຈທກ	5 ເມສາ 2006
1719/ຈທກ	26 ກຸມພາ 2009
0244/ຈທກ	20 ກຸມພາ 2012
1436/ຈທກ	15 ພະຈິກ 2012
791/ຈທກ	13 ພະຈິກ 2015
1016/ຈທກ	5 ທັນວາ 2016
0247/ຈທກ	24 ມິນາ 2017
0688/ຈທກ	2 ສິງຫາ 2017
0160/ຈທກ	20 ກຸມພາ 2018

ພາຍໃນປີ, ກິດຈະກຳຫຼັກທີ່ດຳເນີນໂດຍບໍລິສັດແມ່ນມີດັ່ງນີ້:

- ຜະລິດຊີມັງ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊີມັງ;
- ຂາຍສົ່ງ ແລະ ຂາຍຍ່ອຍຊີມັງ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊີມັງສຳລັບການບໍລິໂພກພາຍໃນ ແລະ ສົ່ງອອກ.

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນຂອງບໍລິສັດຕັ້ງຢູ່ ຖະໜົນໜອງບອນ, ບ້ານໜອງບອນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດຍັງມີໂຮງງານຊີມັງວັງວຽງ ຫຼັງ 2 ຢູ່ເມືອງວັງວຽງ, ແຂວງ ວຽງຈັນ, ສປປ ລາວ.

ບໍລິສັດ ຊິມັ່ງລາວ ມະຫາຊົນ

ຂໍ້ມູນທົ່ວໄປ (ຕໍ່)

ສະພາອຳນວຍການ

ສະມາຊິກສະພາອຳນວຍການ ພາຍໃນປີ ແລະ ນະວັນທີຂອງບົດລາຍງານສະບັບນີ້ລວມມີ:

ທ່ານ ຫຼີ ເຫວີຍ	ປະທານ
ທ່ານ ບຸນແປງ ບົວພັນ	ຮອງປະທານ
ທ່ານ ຈ່າງ ລີ້	ສະມາຊິກ
ທ່ານ ລີ ມິ່ງ	ສະມາຊິກ
ທ່ານ ເຈຍ ເຢົາຊີ	ສະມາຊິກ
ທ່ານ ຄຳບົນ ໄຊເລົ່າວົງ	ສະມາຊິກ
ທ່ານ ທອງປົນ ກິ່ງຄຳເພັດ	ສະມາຊິກ
ທ່ານ ສ່ຽວ ເຈຍ	ສະມາຊິກອິດສະຫຼະ
ທ່ານ ຫຼີ ຊຸນ ໂປ	ສະມາຊິກອິດສະຫຼະ
ທ່ານ ວົງວິຈິດ ແກ້ວວົງກິດ	ສະມາຊິກອິດສະຫຼະ

ຄະນະບໍລິຫານຂອງບໍລິສັດ

ສະມາຊິກຄະນະບໍລິຫານຂອງບໍລິສັດ ພາຍໃນປີ ແລະ ນະວັນທີຂອງບົດລາຍງານສະບັບນີ້ລວມມີ:

ທ່ານ ຈ່າງ ລີ້	ຜູ້ອຳນວຍການໃຫຍ່
ທ່ານ ຫຼີ ເຫວີຍ	ຜູ້ອຳນວຍການ
ທ່ານ ບຸນແປງ ບົວພັນ	ຜູ້ອຳນວຍການ
ທ່ານ ລີ ມິ່ງ	ຜູ້ອຳນວຍການ
ທ່ານ ເຈຍ ເຢົາຊີ	ຜູ້ອຳນວຍການ
ທ່ານ ຄຳບົນ ໄຊເລົ່າວົງ	ຜູ້ອຳນວຍການ
ທ່ານ ທອງປົນ ກິ່ງຄຳເພັດ	ຜູ້ອຳນວຍການ
ທ່ານ ສ່ຽວ ເຈຍ	ຜູ້ອຳນວຍການ
ທ່ານ ຫຼີ ຊຸນ ໂປ	ຜູ້ອຳນວຍການ
ທ່ານ ວົງວິຈິດ ແກ້ວວົງກິດ	ຜູ້ອຳນວຍການ

ຄະນະກຳມະການກວດສອບ

ສະມາຊິກຄະນະກຳມະການກວດສອບຂອງບໍລິສັດ ພາຍໃນປີ ແລະ ນະວັນທີຂອງບົດລາຍງານສະບັບນີ້ລວມມີ:

ທ່ານ ສ່ຽວ ເຈຍ	ປະທານ
ທ່ານ ຫຼີ ຊຸນ ໂປ	ສະມາຊິກ
ທ່ານ ວົງວິຈິດ ແກ້ວວົງກິດ	ສະມາຊິກ

ຜູ້ຕາງໜ້າທາງດ້ານກົດໝາຍ

ຕິວທາງທາງດ້ານກົດໝາຍຂອງບໍລິສັດ ພາຍໃນປີ ແລະ ນະວັນທີບົດລາຍງານສະບັບນີ້ແມ່ນ ທ່ານ ຈ່າງ ລີ້, ຜູ້ອຳນວຍການໃຫຍ່.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອິນແອນຢັ່ງ ລາວ ຈຳກັດ.

ບໍລິສັດ ຊີມັງລາວ ມະຫາຊົນ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານບໍລິສັດ ຊີມັງລາວ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ເອກະສານລາຍງານການເງິນຂອງບໍລິສັດ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019.

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ

ຄະນະບໍລິຫານມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ ເຊິ່ງຖືກກະກຽມອີງຕາມນະໂຍບາຍການບັນຊີຕາມທີ່ໄດ້ລະບຸໃນບົດອະທິບາຍ ເລກທີ 3 ຂອງເອກະສານລາຍງານການເງິນ. ນະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງນຳສະເໜີຖານະການເງິນ, ຜົນຂອງການດຳເນີນງານ ແລະ ກະແສເງິນສົດຂອງບໍລິສັດໂດຍສອດຄ່ອງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ໃນການກະກຽມເອກະລາຍງານການເງິນ, ຄະນະບໍລິຫານຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ;
- ຖະແຫຼງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດຕາມມາດຕະຖານ, ສິ່ງທີ່ໄດ້ປະຕິບັດແຕກຕ່າງຈາກມາດຕະຖານຈະຕ້ອງຖືກເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນ; ແລະ,
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ບໍລິສັດຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າບໍລິສັດ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານມີໜ້າທີ່ຮັບປະກັນວ່າ ບັນດາຂໍ້ມູນການບັນທຶກທາງບັນຊີໄດ້ຖືກເປີດເຜີຍຖານະທາງການເງິນຂອງບໍລິສັດຢ່າງສົມເຫດສົມຜົນຕະຫລອດເວລາ ແລະ ຮັບປະກັນວ່າ ເອກະສານລາຍງານການເງິນແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ຄະນະບໍລິຫານຂອງບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສົມບັດຂອງບໍລິສັດ ແລະ ຮັບປະກັນວ່າບໍລິສັດມີ ຂັ້ນຕອນທີ່ສົມເຫດສົມຜົນໃນການປ້ອງກັນ ແລະ ຄົ້ນຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານຢັ້ງຢືນວ່າ ໄດ້ປະຕິບັດຕາມທຸກຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນສະບັບນີ້.

ຖະແຫຼງການຂອງຄະນະບໍລິຫານ

ຄະນະບໍລິຫານ ຂໍຖະແຫລງວ່າເອກະສານລາຍງານການເງິນແມ່ນໄດ້ກະກຽມຖືກຕ້ອງຕາມຄວາມເປັນຈິງ ສອດຄ່ອງກັບນະໂຍບາຍບັນຊີທີ່ລະບຸໄວ້ໃນບົດອະທິບາຍ ເລກທີ 3 ຂອງເອກະສານລາຍງານການເງິນ.

ໃນນາມຄະນະບໍລິຫານ:

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ໝູ່ເພັນ ຈາງ ສີ

ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

21 ພຶດສະພາ 2020

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີອ້າງອີງ: 61228095/21312738

ບົດລາຍງານຂອງນັກກວດສອບອິດສະຫຼະ

ຮຽນ : ຜູ້ຖືຮຸ້ນຂອງ ບໍລິສັດ ຊີມັ່ງລາວ ມະຫາຊົນ ທີ່ນັບຖື

ຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນຂອງ ບໍລິສັດ ຊີມັ່ງລາວ ມະຫາຊົນ ("ບໍລິສັດ"), ເຊິ່ງປະກອບດ້ວຍ ໃບລາຍງານຖານະການເງິນ ນະວັນທີ 31 ທັນວາ 2019, ແລະ ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍເອກະສານລາຍງານການເງິນ ລວມທັງບົດສະຫຼຸບນະໂຍບາຍ ການບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນຂອງບໍລິສັດໄດ້ຖືກກະກຽມໂດຍຖືກຕ້ອງຕາມຄວາມເປັນຈິງ, ສອດຄ່ອງກັບ ນະໂຍບາຍການບັນຊີ ທີ່ລະບຸໄວ້ໃນບົດອະທິບາຍ ເລກທີ 3 ຂອງເອກະສານລາຍງານການເງິນ.

ພື້ນຖານໃນການອອກຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບ ໂດຍອີງຕາມມາດຕະຖານ ວ່າດ້ວຍການກວດສອບສາກົນ (ISAs). ບັນດາຄວາມຮັບຜິດຊອບ ຂອງພວກຂ້າພະເຈົ້າ ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນໄດ້ຖືກອະທິບາຍເພີ່ມຕື່ມໃນຫົວ *ຄວາມຮັບຜິດຊອບຂອງນັກກວດສອບໃນການ ກວດສອບເອກະສານລາຍງານການເງິນ* ຂອງບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າ ແມ່ນມີຄວາມເປັນເອກະລາດຈາກບໍລິສັດ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ບັນດາຂໍ້ກຳນົດທາງ ດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງສະພາ ມາດຕະຖານສາກົນດ້ານຈັນຍາບັນ. ພວກຂ້າພະເຈົ້າ ເຊື່ອວ່າຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

ບັນຫາທີ່ສຳຄັນໃນການກວດສອບ

ບັນຫາທີ່ສຳຄັນໃນການກວດສອບແມ່ນບັນຫາທີ່ເກີດຈາກການໃຊ້ດຸນພິນິດຢ່າງມືອາຊີບຂອງພວກຂ້າພະເຈົ້າ, ເຊິ່ງມີຄວາມສຳຄັນຫຼາຍທີ່ສຸດ ໃນການກວດສອບເອກະສານລາຍງານການເງິນຂອງປີປັດຈຸບັນ. ບັນຫາເຫຼົ່ານີ້ໄດ້ຖືກລະບຸໄວ້ໃນເນື້ອໃນຂອງເອກະສານລາຍງານການເງິນທີ່ ກວດສອບໂດຍພວກຂ້າພະເຈົ້າໂດຍລວມ, ແລະ ໃນຮູບແບບຄຳເຫັນຂອງພວກຂ້າພະເຈົ້າ, ແລະ ພວກຂ້າພະເຈົ້າບໍ່ໄດ້ສະໜອງຄຳເຫັນຍ່ອຍ ກ່ຽວກັບບັນຫາດັ່ງກ່າວ. ສຳລັບບັນຫາລຸ່ມນີ້, ພວກຂ້າພະເຈົ້າໄດ້ໃຫ້ນິຍາມວິທີການຄົ້ນພົບບັນຫາເຊິ່ງຖືກສະໜອງໃນເນື້ອໃນດັ່ງກ່າວ.

ພວກຂ້າພະເຈົ້າໄດ້ປະຕິບັດຕາມຄວາມຮັບຜິດຊອບທີ່ໄດ້ອະທິບາຍໄວ້ໃນຫົວ ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອ ກະສານລາຍງານການເງິນໃນບົດລາຍງານຂອງພວກຂ້າພະເຈົ້າ, ລວມທັງບັນຫາທີ່ກ່ຽວຂ້ອງກັບບັນຫາທີ່ເຫຼົ່ານີ້. ດັ່ງນັ້ນ, ການກວດສອບຂອງ ພວກຂ້າພະເຈົ້າ ລວມທັງການປະຕິບັດບັນດາຂັ້ນຕອນທີ່ອອກແບບມາເພື່ອຕອບສະໜອງຕໍ່ການປະເມີນຄວາມສ່ຽງທີ່ມີສາລະສຳຄັນຂອງເອ ກະສານລາຍງານການເງິນ. ຜົນຂອງຂັ້ນຕອນການກວດສອບຂອງພວກຂ້າພະເຈົ້າ, ລວມທັງບັນດາຂັ້ນຕອນເພື່ອຊອກຫາບັນຫາດັ່ງລຸ່ມນີ້, ສະ ໜອງພື້ນຖານໃນການອອກຄຳເຫັນຂອງພວກຂ້າພະເຈົ້າ ຕໍ່ເອກະສານລາຍງານທາງການເງິນ.

A member firm of Ernst & Young Global Limited

Building a better working world

ການເສື່ອມມູນຄ່າຂອງເຄື່ອງໃນສາງ

ນະວັນທີ 31 ທັນວາ 2019, ບໍລິສັດໄດ້ສະແດງມູນຄ່າສຸດທິທັງໝົດຂອງເຄື່ອງໃນສາງໃນມູນຄ່າ 39.2 ຕື້ ກີບ, ລວມທັງເງິນແຮໃນມູນຄ່າ 0.57 ຕື້ ກີບ. ຍອດທັງໝົດຂອງເຄື່ອງໃນສາງແມ່ນເທົ່າກັບ 31 % ຂອງຊັບສິນທັງໝົດຂອງບໍລິສັດ. ພວກຂ້າພະເຈົ້າ ໄດ້ພິຈາລະນາການຕີມູນຄ່າຂອງເຄື່ອງສາງເປັນບັນຫາສຳຄັນໃນການກວດສອບ ເນື່ອງຈາກ (ກ) ຜົນກະທົບຂອງການດັດແກ້ເງິນແຮເຄື່ອງໃນສາງແມ່ນມີເນື້ອໃນສຳຄັນຕໍ່ກຳໄລ ຫຼື ຂາດທຶນພາຍໃນປີ, ແລະ (ຂ) ການຄິດໄລ່ການເສື່ອມມູນຄ່າຂອງເຄື່ອງໃນສາງແມ່ນຈະຕ້ອງໃຊ້ດຸນພິນິດທີ່ສຳຄັນໃນການກຳນົດມູນຄ່າເສື່ອມ ແລະ ຄາດຄະເນລາຄາຂາຍ. ດັ່ງນັ້ນ, ຂັ້ນຕອນການກວດສອບຂອງພວກຂ້າພະເຈົ້າຕໍ່ບັນຫາດັ່ງກ່າວ ລວມທັງການທຳຄວາມເຂົ້າໃຈບັນດາຂັ້ນຕອນພາຍໃນໃນການຕີມູນຄ່າເຄື່ອງໃນສາງຂອງບໍລິສັດ, ກວດສອບສະພາບຕົວຈິງຂອງເຄື່ອງໃນສາງ ແລະ ກວດມູນຄ່າສຸດທິຕົວຈິງທີ່ກ່ຽວຂ້ອງ. ການເປີດເຜີຍຂອງບໍລະສັດກ່ຽວກັບນະໂຍບາຍທາງບັນຊີທີ່ກ່ຽວຂ້ອງ ແລະ ລາຍລະອຽດຂອງການເປີດເຜີຍກ່ຽວກັບເຄື່ອງໃນສາງຂອງບໍລິສັດແມ່ນໄດ້ນຳສະເໜີໃນບົດອະທິບາຍ ເລກທີ 3 ແລະ 8.

ການຮັບຮູ້ລາຍຮັບ

ລາຍຮັບຂອງບໍລິສັດປະກອບດ້ວຍລາຍຮັບຈາກການຂາຍສິ່ງ ແລະ ການຂາຍຍ່ອຍຜະລິດຕະພັນຊິມັງເຊິ່ງລາຍຮັບສ່ວນໃຫຍ່ແມ່ນມາຈາກການຂາຍສິ່ງ. ໄລຍະເວລາຂອງການຂົນສິ່ງ ແລະ ເງື່ອນໄຂຕ່າງໆຂອງທຸລະກິດການຂາຍສິ່ງຂອງບໍລິສັດ ມີຜົນກະທົບໂດຍກົງກັບຄວາມຖືກຕ້ອງຂອງການຮັບຮູ້ລາຍຮັບ ເນື່ອງຈາກຄວາມແຕກຕ່າງຂອງໄລຍະເວລາ. ພວກຂ້າພະເຈົ້າ ພິຈາລະນາຄວາມຄົບຖ້ວນ ແລະ ເວລາໃນການຮັບຮູ້ລາຍຮັບເປັນຄວາມສ່ຽງໃຫຍ່ຫຼວງທີ່ຕ້ອງໄດ້ມີການພິຈາລະນາໃນການກວດສອບແບບພິເສດ, ໂດຍສະເພາະແມ່ນການຂາຍສິ່ງຊິມັງເຊິ່ງການບັນທຶກ ແລະ ການສົ່ງມອບຕົວຈິງອາດຈະບໍ່ແມ່ນເວລາດຽວກັນ. ເນື່ອງຈາກວ່າ ຮອບວຽນການອອກໃບເກັບເງິນອາດຈະບໍ່ກົງກັບມື້ປິດບັນຊີທ້າຍປີ ແລະ ອາດສົ່ງຜົນກະທົບໃຫຍ່ຫຼວງຕໍ່ກັບກຳໄລ ຫຼື ຂາດທຶນພາຍໃນປີ. ນອກຈາກນັ້ນ ການກວດສອບການຄວບຄຸມຂອງບໍລິສັດໄດ້ຖືກປະຕິບັດ ເພື່ອຮັບປະກັນໄລຍະເວລາໃນການຮັບຮູ້ລາຍຮັບ, ຂັ້ນຕອນການກວດສອບຂອງພວກຂ້າພະເຈົ້າລວມທັງ, ການກວດສອບຕົວຢ່າງຂອງການເຄື່ອນໄຫວລາຍຮັບອື່ນໆ ເພື່ອໝັ້ນໃຈວ່າການຮັບຮູ້ລາຍຮັບແມ່ນຖືກຕ້ອງຕາມໄລຍະເວລາ. ການເປີດເຜີຍຂອງບໍລິສັດກ່ຽວກັບການຮັບຮູ້ລາຍຮັບແມ່ນນຳສະເໜີໃນບົດອະທິບາຍ ເລກທີ 3 ແລະ 17.

ບັນຫາທີ່ຄວນເອົາໃຈໃສ່ – ພື້ນຖານທາງການບັນຊີ

ພວກຂ້າພະເຈົ້າ ສະເໜີໃຫ້ເອົາໃຈໃສ່ໃນບົດອະທິບາຍ ເລກທີ 3 ຂອງເອກະສານລາຍງານການເງິນ ທີ່ໄດ້ລະບຸກ່ຽວກັບນະໂຍບາຍການບັນຊີທີ່ຖືກນຳໃຊ້ໂດຍບໍລິສັດ. ນະໂຍບາຍການບັນຊີເຫຼົ່ານີ້ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງບໍລິສັດ ໂດຍສອດຄ່ອງກັບຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ຄຳເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ອອກຄຳເຫັນກ່ຽວກັບບັນຫາດັ່ງກ່າວ.

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ກັບເອກະສານລາຍງານການເງິນ

ຄະນະບໍລິຫານຂອງບໍລິສັດແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບນະໂຍບາຍດ້ານການການບັນຊີ ຕາມທີ່ໄດ້ອະທິບາຍໃນບົດອະທິບາຍ ເລກທີ 3 ຂອງເອກະສານລາຍງານການເງິນ, ສຳລັບການຄວບຄຸມພາຍໃນທີ່ຄະນະບໍລິຫານພິຈາລະນາວ່າ ມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນ ໂດຍປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງບໍລິສັດທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ, ການເປີດເຜີຍຕາມຄວາມເໝາະສົມ, ບັນຫາທີ່ກ່ຽວຂ້ອງກັບຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ເວັ້ນເສຍແຕ່ ຄະນະບໍລິຫານບໍລິສັດ ມີເຈດຕະນາຍົກເລີກກິດຈະການຂອງບໍລິສັດ ຫຼື ຢຸດກິດຈະການ.

A member firm of Ernst & Young Global Limited

Building a better working world

ຄວາມຮັບຜິດຊອບຂອງນັກກວດສອບຕໍ່ການກວດສອບເອກະສານລາຍງານການເງິນ

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບປະກັນ ການຮັບປະກັນທີ່ສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍ ພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫລື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດ ລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນ ລະດັບສູງແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນຈະສາມາດກວດພົບ ຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິ ຈາລະນາວ່າ ສຳຄັນຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະ ສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາ ຊີບໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບ ປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າ ພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຜົນທີ່ມາຈາກຄວາມ ຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະ ເມີດຫຼັກການການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມ ກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງບໍລິສັດ.
- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະບໍລິຫານ.
- ສະຫຼຸບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຂອງຄະນະ ບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນ ຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງບໍລິສັດໃນສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກ ຂ້າພະເຈົ້າ ສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະ ຫຼະໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດ ສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ບໍລິສັດຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.

A member firm of Ernst & Young Global Limited

Building a better working world

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະບໍລິຫານຂອງບໍລິສັດກ່ຽວກັບບັນຫາເຫຼົ່ານັ້ນ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ພົບເຫັນທາງການກວດສອບທີ່ສຳຄັນ, ປະກອບມີບັນດາຂໍ້ບົກຜ່ອງທີ່ສຳຄັນຕ່າງໆໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ພົບໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ພວກຂ້າພະເຈົ້າ ໄດ້ໃຫ້ຖະແຫຼງການກັບຄະນະບໍລິຫານບໍລິສັດວ່າ ພວກຂ້າພະເຈົ້າໄດ້ປະຕິບັດຕາມທຸກຂໍ້ກຳນົດດ້ານກົດຈັນຍາບັນທີ່ກຳນົດເຊິ່ງກ່ຽວຂ້ອງກັບຄວາມເປັນເອກະລາດ, ການສື່ສານຂອງພວກຂ້າພະເຈົ້າກ່ຽວກັບຄວາມສຳພັນ ແລະ ບັນຫາອື່ນໆທີ່ອາດມີເຫດຜົນທີ່ພວກຂ້າພະເຈົ້າຄວນຄຳນຶງເຖິງຄວາມເປັນເອກະລາດຂອງພວກຂ້າພະເຈົ້າ ແລະ ການປ້ອງກັນທີ່ກ່ຽວຂ້ອງ ຖ້າມີ.

ຈາກກໍລະນີໃນການສື່ສານກັບຄະນະບໍລິຫານຂອງບໍລິສັດ, ພວກຂ້າພະເຈົ້າພິຈະລະນາວ່າສິ່ງເຫຼົ່ານັ້ນເປັນສິ່ງທີ່ສຳຄັນທີ່ສຸດໃນການກວດສອບເອກະສານການເງິນໃນໄລຍະປັດຈຸບັນ ແລະ ເປັນບັນຫາທີ່ສຳຄັນໃນການກວດສອບ. ພວກຂ້າພະເຈົ້າໄດ້ອະທິບາຍເຫດການເຫຼົ່ານັ້ນໃນບົດລາຍງານນັກກວດສອບອິດສະຫຼະຂອງພວກຂ້າພະເຈົ້າ. ເວັ້ນເສຍແຕ່ຖ້າມີກົດໝາຍ ຫຼື ຂໍ້ບັງຄັບທີ່ບໍ່ອະນຸຍາດໃຫ້ເປີດເຜີຍຕໍ່ມວນຊົນ ຫຼື ເມື່ອໃນສະຖານະການທີ່ຫຍຸ້ງຍາກພວກຂ້າພະເຈົ້າ ຫາກພິຈາລະນາວ່າບັນຫາເຫຼົ່ານັ້ນບໍ່ຄວນສື່ສານລົງໃນບົດລາຍງານຂອງພວກຂ້າພະເຈົ້າ ເພາະອາດຈະເກີດຜົນກະທົບດ້ານລົບຈາກການກະທຳນັ້ນໆຫຼາຍກວ່າຜົນປະໂຫຍດຕໍ່ມວນຊົນກ່ຽວກັບການສື່ສານດັ່ງກ່າວ

ໃນນາມບໍລິສັດ ເອີນແອນຢັ ລາວ ຈຳກັດ

ບໍລິສັດ ເອີນ ແອນ ຢັ ລາວ ຈຳກັດ
ERNST & YOUNG LAO CO.,LTD

ແອ່ງຫວ ຈິກ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ

21 ພຶດສະພາ 2020

A member firm of Ernst & Young Global Limited

ບໍລິສັດ ຊິມັງລາວ ມະຫາຊົນ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	*31 ທັນວາ 2019 ກີບ*	*31 ທັນວາ 2018 ກີບ*
ຊັບສິນ			
ຊັບສິນບໍ່ໝຸນວຽນ			
ຊັບສິນ, ອາຄານ ແລະ ອຸປະກອນ	4	23,979,494,095	28,326,971,138
ຊັບສິນພວມກໍ່ສ້າງ	5	6,380,185,757	6,862,989,484
ຊັບສິນບັດຄົງທີ່ບໍ່ມີຕົວຕົນ		328,548,475	328,548,475
ຊັບສິນບໍ່ໝຸນວຽນອື່ນໆ	6	305,080,000	368,200,000
ລວມຊັບສິນບໍ່ໝຸນວຽນ		**30,993,308,327**	**35,886,709,097**
ຊັບສິນໝຸນວຽນ			
ຊັບສິນໝຸນວຽນອື່ນໆ	7	1,977,956,996	1,040,538,316
ເຄື່ອງໃນສາງ	8	39,167,406,250	40,487,833,371
ໜີ້ຕ້ອງຮັບອື່ນໆ	9	256,035,247	784,102,807
ເງິນລ່ວງໜ້າໃຫ້ແກ່ຜູ້ສະໜອງ		72,737,500	32,639,750
ໜີ້ຕ້ອງຮັບທາງການຄ້າ	10	47,409,610,309	38,296,802,133
ການລົງທຶນໄລຍະສັ້ນ		-	12,000,000,000
ເງິນສົດ	11	6,042,043,762	6,249,412,532
ລວມຊັບສິນໝຸນວຽນ		**94,925,790,064**	**98,891,328,909**
ລວມຊັບສິນທັ້ງໝົດ		**125,919,098,391**	**134,778,038,006**

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານຖານະທາງການເງິນ (ຕໍ່)
ນະວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	*31 ທັນວາ 2019 ກີບ*	*31 ທັນວາ 2018 ກີບ*
ໜີ້ສິນ ແລະ ທຶນ			
ໜີ້ສິນໝຸນວຽນ			
ເງິນກູ້ຍືມ	12	8,000,000,000	-
ເຈົ້າໜີ້ການຄ້າ		18,325,956,786	11,228,343,680
ເງິນລ່ວງລູກໜ້າຈາກລູກຄ້າ		152,773,000	152,773,000
ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ອື່ນ	25	5,899,906,226	7,316,302,084
ພັນທະອາກອນ	13	5,455,580,866	7,916,000,726
ໜີ້ຕ້ອງສົ່ງໃຫ້ພະນັກງານ		4,002,595,690	-
ຄ້ຳສຳຮອງສະຫວັດດີການ	14	1,504,476,810	1,878,498,865
ໜີ້ຕ້ອງສົ່ງອື່ນໆ	15	13,760,329,808	13,746,210,887
ລວມໜີ້ສິນໝຸນວຽນ		**57,101,619,186**	**42,238,129,242**
ລວມໜີ້ສິນທັງໝົດ		**57,101,619,186**	**42,238,129,242**
ທຶນ			
ທຶນຈົດທະບຽນຕາມກົດໝາຍທີ່ຖອກແລ້ວ	16	20,002,000,000	20,002,000,000
ສ່ວນເກີນມູນຄ່າຮຸ້ນ		18,385,975,511	18,385,975,511
ຄ້ຳສຳຮອງຕາມລະບຽບການ		7,704,052,546	7,661,007,370
ຄ້ຳສຳຮອງເພື່ອຂະຫຍາຍກິດຈະການ		18,549,465,596	18,484,897,832
ກຳໄລສະສົມ		4,175,985,552	28,006,028,051
ລວມທຶນ		**68,817,479,205**	**92,539,908,764**
ລວມໜີ້ສິນ ແລະ ທຶນທັງໝົດ		**125,919,098,391**	**134,778,038,006**

ທ່ານ ຈ່າງ ລີ້
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຢົງຟູ
ຜູ້ຈັດການຝ່າຍການບັນຊີ – ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

21 ພຶດສະພາ 2020

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	*2019 ກີບ*	*2018 ກີບ*
ລາຍຮັບຈາກການຂາຍສິນຄ້າ	17	83,493,480,308	97,411,605,646
ຕົ້ນທຶນຈາກການຂາຍ	18	(93,214,964,208)	(86,950,106,443)
ລວມ(ຂາດທຶນ)/ກຳໄລ		**(9,721,483,900)**	**10,461,499,203**
ລາຍໄດ້ຈາກການດຳເນີນງານອື່ນໆ	19	297,570,956	585,411,222
(ເງິນແຮ)/ເກັບຄືນເງິນແຮໜີ້ຫວງຍາກ		(36,364,996)	660,246,038
ຕົ້ນທຶນຈາກການຂາຍ ແລະ ຈຳໜ່າຍ	20	(2,616,586,556)	(2,497,527,176)
ລາຍຈ່າຍໃນການດຳເນີນງານ	21	(10,171,011,813)	(8,733,566,377)
(ຂາດທຶນ)/ກຳໄລຈາກການດຳເນີນງານ		**(22,247,876,309)**	**476,062,910**
ລາຍຮັບທາງການເງິນ	22	469,367,780	989,778,683
ລາຍຈ່າຍທາງການເງິນ	23	(700,755,855)	(898,296,928)
(ຂາດທຶນ)/ກຳໄລ ກ່ອນອາກອນ		**(22,479,264,384)**	**567,544,665**
ອາກອນກຳໄລ	24	-	(137,092,911)
(ຂາດທຶນ)/ກຳໄລ ສຸດທິຫຼັງອາກອນພາຍໃນປີ		**(22,479,264,384)**	**430,451,754**

ທ່ານ ຈ່າງ ລີ້
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຢົງຟູ
ຜູ້ຈັດການຝ່າຍການບັນຊີ – ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

21 ພຶດສະພາ 2020

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ທຶນຈົດທະບຽນທີ່ໄດ້ຖອກແລ້ວ *ກີບ*	*ສ່ວນເກີນມູນຄ່າຮຸ້ນ* *ກີບ*	*ຄັງສຳຮອງຕາມລະບຽບການ* *ກີບ*	*ຄັງສຳຮອງເພື່ອຂະຫຍາຍກິດຈະການ* *ກີບ*	*ກຳໄລສະສົມ* *ກີບ*	*ລວມທັງໝົດ* *ກີບ*
ຍອດເຫຼືອນະວັນທີ 1 ມັງກອນ 2018	14,001,400,000	16,660,000	6,800,594,894	17,194,279,118	34,320,887,134	72,333,821,146
ອອກຮຸ້ນໃໝ່	6,000,600,000	18,369,315,511	-	-	-	24,369,915,511
ກຳໄລສຸດທິພາຍໃນປີ	-	-	-	-	430,451,754	430,451,754
ໂອນເປັນຄັງສຳຮອງຕາມລະບຽບການ	-	-	860,412,476	-	(860,412,476)	-
ໂອນເປັນຄັງສຳຮອງອື່ນໆ	-	-	-	1,290,618,714	(1,290,618,714)	-
ອາກອນເພີ່ມເຕີມສຳລັບປີຜ່ານມາຕາມການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ	-	-	-	-	(933,587,969)	(933,587,969)
ໂອນເປັນຄັງສຳຮອງສະຫວັດດີການ	-	-	-	-	(860,412,478)	(860,412,478)
ຈ່າຍເງິນປັນຜົນ	-	-	-	-	(2,800,279,200)	(2,800,279,200)
ຍອດເຫຼືອນະວັນທີ 31 ທັນວາ 2018	**20,002,000,000**	**18,385,975,511**	**7,661,007,370**	**18,484,897,832**	**28,006,028,051**	**92,539,908,764**
ຍອດເຫຼືອນະວັນທີ 1 ມັງກອນ 2019	20,002,000,000	18,385,975,511	7,661,007,370	18,484,897,832	28,006,028,051	92,539,908,764
ຂາດທຶນສຸດທິພາຍໃນປີ	-	-	-	-	(22,479,264,384)	(22,479,264,384)
ໂອນເປັນຄັງສຳຮອງຕາມລະບຽບການ	-	-	43,045,176	-	(43,045,176)	-
ໂອນເປັນຄັງສຳຮອງອື່ນໆ	-	-	-	64,567,764	(64,567,764)	-
ໂອນເປັນຄັງສຳຮອງສະຫວັດດີການ	-	-	-	-	(43,045,175)	(43,045,175)
ຈ່າຍເງິນປັນຜົນ	-	-	-	-	(1,200,120,000)	(1,200,120,000)
ຍອດເຫຼືອນະວັນທີ 31 ທັນວາ 2019	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**4,175,985,552**	**68,817,479,205**

ທ່ານ ຈ່າງ ລີ

ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

21 ພຶດສະພາ 2020

ທ່ານ ຈ່າງ ຢິງຟູ

ຜູ້ຈັດການຝ່າຍການບັນຊີ – ການເງິນ

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	2019 ກີບ	2018 ກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ			
(ຂາດທຶນ)/ກຳໄລ ກ່ອນອາກອນ		**(22,479,264,384)**	**567,544,665**
ດັດແກ້:			
ຄ່າຫຼ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນ		8,622,520,702	7,200,410,610
ການປ່ຽນແປງເງິນແຮສຳລັບເຄື່ອງໃນສາງ		41,957,128	528,194,628
ການປ່ຽນແປງເງິນແຮສຳລັບໜີ້ທວງຍາກ		36,364,996	(674,746,038)
ຂາດທຶນສຸດທິຈາກອັດຕາແລກປ່ຽນ		124,993,780	87,311,602
ກຳໄລຈາກກິດຈະກຳການລົງທຶນ		(427,770,879)	(602,443,288)
ລາຍຈ່າຍດອກເບ້ຍ		313,333,331	229,244,386
ການດຳເນີນງານ (ຂາດທຶນ)/ລາຍໄດ້ກ່ອນການປ່ຽນແປງຂອງທຶນໝຸນວຽນ		**(13,767,865,326)**	**7,335,516,565**
(ເພີ່ມຂຶ້ນ)/ຫຼຸດລົງຂອງໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນ		(9,138,777,265)	4,583,170,277
ຫຼຸດລົງ/(ເພີ່ມຂຶ້ນ) ຂອງເຄື່ອງໃນສາງ		1,278,469,994	(9,539,782,464)
ເພີ່ມຂຶ້ນຂອງໜີ້ຕ້ອງສິ່ງທາງການຄ້າ ແລະ ໜີ້ຕ້ອງສິ່ງອື່ນ		6,695,450,990	487,329,945
ລາຍຈ່າຍດອກເບ້ຍເງິນກູ້ຢືມ		(313,333,331)	(229,244,386)
ລາຍຈ່າຍອາກອນລາຍໄດ້		(396,724,779)	(1,081,894,498)
ກະແສເງິນສົດສຸດທິ (ນຳໃຊ້ໃນ)/ຈາກກິດຈະກຳການດຳເນີນງານ		**(15,642,779,717)**	**1,555,095,439**
ກະແສເງິນສົດທີ່ໃຊ້ໃນກິດຈະກຳການລົງທຶນ			
ຈັດຊື້ຊັບສິນ, ອາຄານ ແລະ ອຸປະກອນ		(3,792,239,932)	(3,064,407,878)
ຂາຍຊັບສິນບັດຄົງທີ່		120,277,200	-
ສ່ວນປ່ຽນແປງສຸດທິຂອງເງິນຝາກມີກຳນົດ		12,000,000,000	(12,000,000,000)
ລາຍຮັບຈາກດອກເບ້ຍເງິນຝາກ		307,493,679	196,287,672
ກະແສເງິນສົດສຸດທິຈາກ/(ນຳໃຊ້)ໃນກິດຈະກຳການລົງທຶນ		**8,635,530,947**	**(14,868,120,206)**
ກະແສເງິນສົດຈາກກິດຈະກຳທາງການເງິນ			
ການຈຳໜ່າຍຮຸ້ນສຸດທິ		-	24,369,915,511
ລາຍຈ່າຍເງິນປັນຜົນ		(1,200,120,000)	(4,179,851,600)
ເງິນກູ້ຈາກທະນາຄານ		8,000,000,000	-
ຊຳລະເງິນກູ້ຢືມຈາກທະນາຄານ		-	(12,107,150,240)
ກະແສເງິນສົດສຸດທິ ຈາກກິດຈະກຳການເງິນ		**6,799,880,000**	**8,082,913,671**
ການປ່ຽນແປງສຸດທິຂອງເງິນສົດ		(207,368,770)	(5,230,111,096)
ເງິນສົດໃນຕົ້ນປີ		6,249,412,532	11,479,523,628
ເງິນສົດທ້າຍໃນທ້າຍປີ	11	**6,042,043,762**	**6,249,412,532**

ທ່ານ ຈ້າ ລີ້
ຜູ້ອຳນວຍການໃຫຍ່
ນະຄອນຫຼວງວຽງຈັນ, ສປປ ລາວ

ທ່ານ ຈ້າງ ຢົ່ງຟູ
ຜູ້ຈັດການຝ່າຍການບັນຊີ – ການເງິນ

21 ພຶດສະພາ 2020

ບໍລິສັດ ຊິມັ່ງລາວ ມະຫາຊົນ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ
ນະວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

1. ຂໍ້ມູນບໍລິສັດ

ບໍລິສັດ ຊິມັ່ງລາວ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນ ບໍລິສັດ ຊິມັ່ງລາວ ຈຳກັດ ຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນ ຂອງບໍລິ ສັດທີ່ເຊັ່ນຮັບຮອງ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 15 ທັນວາ 1998 ລະຫວ່າງ ລັດວິສາຫະກິດພັດ ທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI) ("ຝ່າຍ ກ") ກັບ ບໍລິສັດຮ່ວມມືສາກົນດ້ານເສດຖະ ກິດ-ເຕັກນິກຢຸນນານ ສປ ຈີນ (CYC) ("ຝ່າຍ ຂ").

ວັນທີ 6 ທັນວາ 1999, ບໍລິສັດໄດ້ຮັບໃບທະບຽນຄັ້ງທຳອິດເລກທີ 1154/ຈທກ ອອກໂດຍ ກະຊວງອຸດສະຫະກຳ ແລະ ການ ຄ້າ, ເຊິ່ງບໍລິສັດໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບຊິມັ່ງ ແລະ ຜະລິດຕະພັນຕ່າງໆທີ່ກ່ຽວຂ້ອງກັບຊິມັ່ງເພື່ອການ ຈຳໜ່າຍພາຍໃນ ແລະ ສົ່ງອອກ.

ບໍລິສັດໄດ້ມີການປັບປຸງໃບທະບຽນວິສາຫະກິດດັ່ງລຸ່ມນີ້:

ໃບທະບຽນວິສາຫະກິດ	*ວັນທີ*
0078/ຈທກ	5 ເມສາ 2006
1719/ຈທກ	26 ກຸມພາ 2009
0244/ຈທກ	20 ກຸມພາ 2012
1436/ຈທກ	15 ພະຈິກ 2012
791/ຈທກ	13 ພະຈິກ 2015
1016/ຈທກ	5 ທັນວາ 2016
0247/ຈທກ	24 ມິນາ 2017
0688/ຈທກ	2 ສິງຫາ 2017
0160/ຈທກ	20 ກຸມພາ 2018

ພາຍໃນປີ, ກິດຈະກຳຫຼັກທີ່ດຳເນີນໂດຍ ບໍລິສັດແມ່ນມີດັ່ງນີ້:

- ຜະລິດຊິມັ່ງ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊິມັ່ງ;
- ຂາຍສົ່ງ ແລະ ຂາຍຍ່ອຍຊິມັ່ງ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊິມັ່ງສຳລັບການບໍລິໂພກພາຍໃນ ແລະ ສົ່ງອອກ.

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນຂອງບໍລິສັດຕັ້ງຢູ່ ຖະໜົນໜອງບອນ, ບ້ານໜອງບອນ, ເມືອງໄຊເສດຖາ, ນະຄອນຫຼວງວຽງ ຈັນ, ສປປ ລາວ. ບໍລິສັດຍັງມີໂຮງງານຊິມັ່ງວັ້ງວຽງ ຫຼັງ 2 ຢູ່ເມືອງວັ້ງວຽງ, ແຂວງ ວຽງຈັນ, ສປປ ລາວ.

ນະວັນທີ 31 ທັນວາ 2019, ບໍລິສັດມີພະນັກງານ 318 ຄົນ (31 ທັນວາ 2018: ພະນັກງານ 394 ຄົນ).

2. ພື້ນຖານການກະກຽມເອກະສານລາຍງານການເງິນ

ເອກະສານລາຍງານການເງິນຂອງບໍລິສັດ ແມ່ນໄດ້ຖືກກະກຽມໂດຍນຳໃຊ້ຫຼັກການຕົ້ນທຶນເດີມ. ເອກະສານລາຍງານການເງິນ ສະບັບນີ້ແມ່ນໄດ້ຖືກລາຍງານເປັນສະກຸນເງິນກີບລາວ ("ກີບ") ເຊິ່ງເປັນສະກຸນເງິນຫຼັກທີ່ນຳໃຊ້ໃນການດຳເນີນທຸລະກິດ ຂອງບໍລິສັດ.

ເອກະສານລາຍງານການເງິນຂອງບໍລິສັດ ແມ່ນໄດ້ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີເຊິ່ງໄດ້ລະບຸໄວ້ໃນບົດ ອະທິບາຍ ເລກທີ 3 ເອກະສານລາຍງານການເງິນ. ນະໂຍບາຍການບັນຊີດັ່ງກ່າວ ບໍ່ໄດ້ມີວັດຖຸປະສົງໃນການນຳສະເໜີຖານະ ການເງິນ, ຜົນຂອງການດຳເນີນງານ ແລະ ກະແສເງິນສົດຂອງບໍລິສັດຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ.

2. ພື້ນຖານການກະກຽມເອກະສານລາຍງານການເງິນ (ຕໍ່)

ປີການບັນຊີ

ປີການບັນຊີຂອງບໍລິສັດແມ່ນ ເລີ່ມຈາກ ວັນທີ 1 ມັງກອນ ແລະ ສິ້ນສຸດ ວັນທີ 31 ທັນວາ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

ຊັບສິນ, ອາຄານ ແລະ ອຸປະກອນ

ຊັບສິນ, ອາຄານ ແລະ ອຸປະກອນແມ່ນບັນທຶກຕາມມູນຄ່າຕົ້ນທຶນລົບໃຫ້ຄ່າຫຼ້ຽຫ້ຽນສະສົມ.

ຕົ້ນທຶນຂອງຊັບສິນ, ອາຄານ ແລະ ອຸປະກອນທີ່ຊື້ໂດຍບໍລິສັດ ເຊິ່ງປະກອບດ້ວຍລາຄາຊື້ ແລະ ທຸກຄ່າໃຊ້ຈ່າຍທີ່ຕິດພັນໂດຍກົງທີ່ເກີດຂຶ້ນໃນການເຮັດໃຫ້ຊັບສິນໃຫ້ຢູ່ໃນສະພາບທີ່ສາມາດໃຊ້ງານຕາມຈຸດປະສົງຂອງການນຳໃຊ້. ລາຍຈ່າຍສຳລັບການເພີ່ມເຕີມ, ການປັບປຸງ ແລະ ການຟື້ນຟູແມ່ນບັນທຶກເຂົ້າໃນມູນຄ່າຕົ້ນທຶນໃນຂະນະທີ່ລາຍຈ່າຍສຳລັບການບຳລຸງຮັກສາ ແລະ ການສ້ອມແປງແມ່ນບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານ.

ເມື່ອຊັບສິນ, ອາຄານ ແລະ ອຸປະກອນໄດ້ຖືກຂາຍ ຫຼື ສະສາງ, ຕົ້ນທຶນ ແລະ ຄ່າຫຼ້ຽຫ້ຽນສະສົມ ແມ່ນຈະຖືກຕັດອອກຈາກໃບລາຍງານຖານະການເງິນ ແລະ ທຸກໆກຳໄລ ຫຼື ຂາດທຶນຈາກການສະສາງ ແມ່ນຈະຖືກລວມຢູ່ໃນລາຍຮັບການດຳເນີນງານອື່ນໆ ຫຼື ບັນຊີລາຍຈ່າຍ ໃນໃບລາຍງານຜົນການດຳເນີນງານ ຕາມລຳດັບ.

ຊັບສິນພວມກໍ່ສ້າງ ສະແດງເຖິງຊັບສິນພາຍໃຕ້ການກໍ່ສ້າງ ເຊິ່ງປະກອບມີຄ່າໃຊ້ຈ່າຍໃນການກໍ່ສ້າງ ແລະ ຄ່າໃຊ້ຈ່າຍໂດຍກົງອື່ນໆ.

ຊັບສິນທີ່ຖືກຫັກຄ່າຫຼ້ຽຫ້ຽນໝົດຕາມອາຍຸການນຳໃຊ້ຈະຖືກເກັບຮັກສາໄວ້ໃນບັນຊີ ຈົນກວ່າຈະບໍ່ມີການນຳໃຊ້ ແລະ ຈະບໍ່ມີຄ່າຫຼ້ຽຫ້ຽນທີ່ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານອີກ.

ຄ່າຫຼ້ຽຫ້ຽນ

ການຫັກຄ່າຫຼ້ຽຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນແມ່ນນຳໃຊ້ວິທີຄິດໄລ່ແບບສະເໝີຕົ້ນຕາມອາຍຸການນຳໃຊ້ຂອງຊັບສິນແຕ່ລະປະເພດດັ່ງນີ້:

ອາຄານ ແລະ ສິ່ງປຸກສ້າງ	5 ຫາ 20 ປີ
ເຄື່ອງຈັກ ແລະ ອຸປະກອນ	5 ປີ
ພາຫະນະຂົນສົ່ງ	5 ປີ
ການປັບປຸງສິດທິໃນການເຊົ່າ	5 ຫາ 10 ປີ
ເຄື່ອງໃຊ້ຫ້ອງການ	5 ຫາ 10 ປີ
ຊັບສິນອື່ນໆ	10 ປີ

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ຄ່າຫຼ້ຽຫ້ຽນ (ຕໍ່)

ອາຍຸການໃຊ້ງານຂອງຊັບສິນເຊົ່າພວມປັບປຸງ ແມ່ນຖືກກຳນົດໂດຍການຄາດການຝ່າຍບໍລິຫານກ່ຽວກັບການໃຊ້ງານ ແລະ ອາດຈະແຕກຕ່າງກັບໄລຍະເວລາຂອງສັນຍາ.

ການຫັກຄ່າຫຼ້ຽຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນທີ່ຊື້ເພີ່ມ ຫຼື ສະສ້າງອອກພາຍໃນປີ ແມ່ນຄິດໄລ່ອີງຕາມສັດສ່ວນໄລຍະເວລາໃນການນຳໃຊ້ນັບແຕ່ມື້ທີ່ເລີ່ມຕົ້ນນຳໃຊ້ ແລະ ມື້ທີ່ສະສ້າງອອກຕົວຈິງ. ບໍ່ມີການຫັກຄ່າຫຼ້ຽຫ້ຽນສຳລັບຊັບສິນພວມກໍ່ສ້າງຈົນກວ່າຈະເຖິງເວລາທີ່ຊັບສິນດັ່ງກ່າວສຳເລັດ ແລະ ຖືກນຳໃຊ້.

ຊັບສິນບັດຄຶງທີ່ທີ່ບໍ່ມີຕົວຕົນ

ຊັບສິນບັດຄຶງທີ່ທີ່ບໍ່ມີຕົວຕົນ ໝາຍເຖິງສິດໃນການນຳໃຊ້ທີ່ດິນທີ່ບໍ່ກຳນົດໄລຍະເວລາການນຳໃຊ້ ແລະ ຖືກລາຍງານໃນມູນຄ່າຕົ້ນທຶນ. ຕົ້ນທຶນຂອງສິດໃນການນຳໃຊ້ທີ່ດິນ ເຊິ່ງປະກອບດ້ວຍ ລາຄາຊື້ ແລະ ຕົ້ນທຶນໂດຍກົງຕ່າງໆແມ່ນຈະບໍ່ມີການຫັກຄ່າເສື່ອມ.

ຊັບສິນບໍ່ໝຸນວຽນອື່ນໆ

ຊັບສິນທີ່ຈັດຊື້, ຄຸ້ມຄອງ ແລະ ນຳໃຊ້ໂດຍບໍລິສັດ ເຊິ່ງອອກຊື່ພາຍໃຕ້ຊື່ຂອງພາກສ່ວນກ່ຽວຂ້ອງອື່ນ ແມ່ນຈະລາຍງານເປັນຊັບສິນບໍ່ໝຸນວຽນອື່ນໆຂອງບໍລິສັດ. ຄ່າຫຼ້ຽຫ້ຽນແມ່ນຖືກຄິດໄລ່ ແບບສະເໝີຕົວຕາມອາຍຸການນຳໃຊ້ຕະຫຼອດໄລຍະ 20 ປີ.

ເຄື່ອງໃນສາງ

ເຄື່ອງໃນສາງແມ່ນຖືກສະແດງໃນມູນຄ່າທີ່ຕ່ຳກວ່າຕົ້ນທຶນທີ່ເກີດຂຶ້ນໃນການນຳເອົາເຄື່ອງໃນສາງມາຢູ່ໃນສະຖານທີ່ ແລະ ສະພາບໃນປັດຈຸບັນ ແລະ ຖືກຮັບຮູ້ຕາມມູນຄ່າສຸດທິທີ່ໄດ້ຮັບ.

ມູນຄ່າສຸດທິທີ່ໄດ້ຮັບ ແມ່ນລາຄາທີ່ຄາດວ່າຈະຂາຍຕາມເງື່ອນໄຂທາງທຸລະກິດທົ່ວໄປ ລົບຄ່າໃຊ້ຈ່າຍຄາດຄະເນ ທີ່ຈະເຮັດໃຫ້ເປັນສິນຄ້າສຳເລັດຮູບ ແລະ ຄ່າໃຊ້ຈ່າຍຄາດຄະເນທີ່ເກີດຂຶ້ນຈາກການຂາຍ.

ລະບົບການຕິດຕາມສາງເປັນໄລຍະ ແມ່ນຖືກນຳໃຊ້ໃນການບັນທຶກເຄື່ອງໃນສາງເຊິ່ງຖືກຕີມູນຄ່າດັ່ງຕໍ່ໄປນີ້:

ວັດຖຸດິບ ສິນຄ້າກຳລັງຜະລິດ ແລະ ສິນຄ້າສຳເລັດຮູບ	– ຕົ້ນທຶນແມ່ນ ຄິດໄລ່ຕາມການຕົ້ນທຶນສະເລ່ຍຖ່ວງໜັກ. – ຕົ້ນທຶນຂອງວັດຖຸດິບ ແລະ ຄ່າແຮງງານທາງກົງບວກກັບຄ່າໃຊ້ຈ່າຍການຜະລິດໂດຍອີງໃສ່ຄວາມສາມາດປະຕິບັດງານປົກກະຕິ ບົນພື້ນຖານມູນຄ່າຕົ້ນທຶນສະເລ່ຍຖ່ວງໜັກ

ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງ

ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງແມ່ນເກີດຈາກການປະເມີນການສູນເສຍທີ່ເກີດຂຶ້ນຍ້ອນການເສື່ອມມູນຄ່າ (ຈາກການຫຼຸດລົງ, ຄວາມເສຍຫາຍ, ການລ້າສະໄໝ ແລະ ອື່ນໆ) ຂອງເຄື່ອງໃນສາງ ໂດຍປະເມີນຕາມຫລັກຖານທີ່ເໝາະສົມຂອງການເສື່ອມມູນຄ່າທີ່ມີຢູ່ນະວັນທີຂອງໃນລາຍງານຖານະການເງິນ.

ການເພີ່ມຂຶ້ນ ແລະ ຫຼຸດລົງຂອງຍອດເຫຼືອເງິນແຮແມ່ນບັນທຶກເຂົ້າຕົ້ນທຶນໃນການຂາຍ ແລະ ການຈຳໜ່າຍ ສະແດງໃນໃບລາຍງານຜົນການດຳເນີນງານ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ໜີ້ຕ້ອງຮັບການຄ້າ ແລະ ເງິນແຮໜີ້ທວງຍາກ

ໜີ້ຕ້ອງຮັບການຄ້າ ແມ່ນສະແດງຕາມມູນຄ່າສຸດທິຂອງ ໜີ້ຕ້ອງຮັບການຄ້າທັງໝົດ ແລະ ເງິນແຮໜີ້ທວງຍາກ.

ບໍລິສັດມີນະໂຍບາຍເງິນແຮໜີ້ຕ້ອງຮັບທວງຍາກສຳລັບໜີ້ຕ້ອງຮັບການຄ້າ ໂດຍອີງຕາມຈຳນວນມື້ການກຳນົດຂອງໜີ້ຕ້ອງຮັບການຄ້າດັ່ງລຸ່ມນີ້:

ໄລຍະການກຳນົດ	*ອັດຕາເງິນແຮ*
6 ເດືອນ ຫາ 1 ປີ	30%
1 ປີ ຫາ 2 ປີ	50%
ຫຼາຍກວ່າ 2 ປີ	100%

ເງິນສົດ

ເງິນສົດປະກອບດ້ວຍເງິນສົດໃນຄັງ ແລະ ເງິນຝາກທະນາຄານ.

ຕົ້ນທຶນເງິນກູ້

ຕົ້ນທຶນເງິນກູ້ ປະກອບດ້ວຍດອກເບ້ຍ ແລະ ລາຍຈ່າຍອື່ນໆທີ່ເກີດຂຶ້ນ ທີ່ກ່ຽວຂ້ອງກັບການກູ້ຢືມເງິນທຶນ. ຕົ້ນທຶນເງິນກູ້ ແມ່ນຖືກບັນທຶກເປັນລາຍຈ່າຍພາຍໃນໄລຍະທີ່ລາຍຈ່າຍດັ່ງກ່າວເກີດຂຶ້ນ.

ໜີ້ຕ້ອງສົ່ງທາງການຄ້າ, ລາຍຈ່າຍຄ້າງຈ່າຍ ແລະ ໜີ້ຕ້ອງສົ່ງອື່ນໆ

ໜີ້ຕ້ອງສົ່ງ ແລະ ລາຍຈ່າຍຄ້າງຈ່າຍ ຈະຖືກຮັບຮູ້ເປັນຈຳນວນທີ່ຕ້ອງຈ່າຍໃນອານາຄົດ ສຳລັບສິນຄ້າ ແລະ ການບໍລິການທີ່ໄດ້ຮັບ, ບໍ່ວ່າໃບເກັບເງິນຈະຖືກສົ່ງ ຫຼື ຍັງບໍ່ສົ່ງໃຫ້ບໍລິສັດກໍ່ຕາມ.

ທຶນຈົດທະບຽນຕາມກົດໝາຍທີ່ຖອກແລ້ວ

ທຶນຈົດທະບຽນຕາມກົດໝາຍທີ່ຖອກແລ້ວ ຈະຖືກຮັບຮູ້ໃນໃບລາຍງານຖານະການເງິນເມື່ອໄດ້ຮັບເງິນຈາກຂາຮຸ້ນ ໃນກໍລະນີທີ່ຖອກທຶນຈົດທະບຽນເປັນເງິນສົດ ຫຼື ເມື່ອມີການອະນຸມັດຈາກຂາຮຸ້ນໃນກໍລະນີທີ່ບໍ່ແມ່ນເງິນສົດ ແລະ ໃບຢັ້ງຢືນຮຸ້ນຖືກອອກໃຫ້. ທຸກໆທຶນຈົດທະບຽນທີ່ຍັງບໍ່ທັນຖອກໂດຍອີງຕາມກົດລະບຽບຂອງບໍລິສັດ, ໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນແມ່ນບໍ່ໄດ້ຖືກຮັບຮູ້ໃນໃບລາຍງານຖານະການເງິນ.

ສ່ວນເກີນມູນຄ່າຮຸ້ນ

ສ່ວນເກີນມູນຄ່າຮຸ້ນຖືກຮັບຮູ້ເວລາມີການອອກຮຸ້ນເພີ່ມ, ມະມູນຄ່າສ່ວນເກີນລະຫວ່າງລາຄາສະເໜີຂາຍຂອງຮຸ້ນທີ່ອອກເພີ່ມ ແລະ ມູນຄ່າໜ້າບັດ, ຫຼັງຈາກຫັກຕົ້ນທຶນຕ່າງໆທີ່ກ່ຽວຂ້ອງກັບການອອກຮຸ້ນ (ເຊັ່ນ: ຄ່າທຳນຽມການຄ້ຳປະກັນການອອກຮຸ້ນ ແລະ ລ່າຍຈ່າຍຕ່າງໆທີ່ກ່ຽວຂ້ອງໃນການຕີມູນຄ່າ, ລາຍຈ່າຍຄ່າທີ່ປຶກສາ).

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ຄັງສຳຮອງ

ອີງຕາມກົດໝາຍວິສາຫະກິດ ເລກທີ 46/ສພຊ ລົງວັນທີ 26 ທັນວາ 2013, ບໍລິສັດມະຫາຊົນຖືກຮຽກຮ້ອງໃຫ້ມີການຫັກກຳໄລສຸດທິຕາມຈຳນວນທີ່ເໝາະສົມເຂົ້າເປັນຄັງແຮຕາມລະບຽບການ.

ຄັງແຮຕາມລະບຽບການເປັນຄັງສຳຮອງເພື່ອຮັບປະກັນຄວາມສ່ຽງທີ່ຈະເກີດຂຶ້ນ, ເຊິ່ງ 10% ຂອງກຳໄລສຸດທິຈະຖືກຫັກເຂົ້າໃນຄັງສຳຮອງດັ່ງກ່າວ, ຫຼັງຈາກຫັກຂາດທຶນສະສົມ. ເມື່ອຄັງແຮດັ່ງກ່າວຫາກມີເງິນສະສົມໄດ້ເຄິ່ງໜຶ່ງຂອງທຶນຈົດທະບຽນ, ບໍລິສັດ ອາດຈະໂຈະການຫັກກຳໄລເຂົ້າຄັງແຮດັ່ງກ່າວ, ເວັ້ນເສຍແຕ່ໄດ້ຮັບອະນຸມັດຈາກເຈົ້າຂອງບໍລິສັດ.

ຄັງແຮອື່ນໆປະກອບມີ ຄັງສຳຮອງສະຫວັດດີການ ແລະ ຄັງສຳຮອງເພື່ອຂະຫຍາຍກິດຈະການເຊິ່ງຫັກຈາກກຳໄລສະສົມຕາມຄວາມເໝາະສົມອີງຕາມກົດລະບຽບພາຍໃນຂອງບໍລິສັດ ລົງວັນທີ 15 ທັນວາ ປີ 1998. ອັດຕາເງິນແຮທີ່ເໝາະສົມຈະຖືກພິຈາລະນາໂດຍສະພາບໍລິຫານຂອງບໍລິສັດໃນແຕ່ລະປີ.

ຄັງແຮຂອງປີການບັນຊີປັດຈຸບັນຖືກຫັກຈາກກຳໄລສຸດທິຂອງປີຜ່ານມາຕາມການອະນຸມັດໃນກອງປະຊຸມຂາຮຸ້ນປະຈຳປີ.

ເງິນຕາຕ່າງປະເທດ

ເອກະສານລາຍງານເງິນ ຖືກລາຍງານເປັນສະກຸນເງິນກີບລາວ ເຊິ່ງເປັນສະກຸນເງິນທີ່ບໍລິສັດໃຊ້ໃນການເຄື່ອນໄຫວ ແລະ ລາຍງານ. ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນອື່ນໆນອກເໜືອຈາກສະກຸນເງິນກີບ ແມ່ນຈະຖືກບັນທຶກໃນເບື້ອງຕົ້ນໂດຍໃຊ້ອັດຕາແລກປ່ຽນໃນມື້ທີ່ລາຍການເຄື່ອນໄຫວເກີດຂຶ້ນ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນສະກຸນເງິນຕ່າງປະເທດ ແມ່ນຈະຖືກປ່ຽນເປັນເງິນກີບ ໂດຍນຳໃຊ້ອັດຕາແລກປ່ຽນໃນມື້ຂອງໃບລາຍງານຖານະການເງິນ. ກຳໄລ ແລະ ຂາດທຶນທັງໝົດຈະຖືກບັນທຶກເປັນລາຍຮັບທາງການເງິນ ແລະ ລາຍຈ່າຍທາງການເງິນຕາມລຳດັບໃນໃບລາຍງານຜົນການດຳເນີນງານ.

ການຮັບຮູ້ລາຍຮັບ

ລາຍຮັບຈະຖືກຮັບຮູ້ ເມື່ອມີຄວາມເປັນໄປໄດ້ວ່າ ຜົນປະໂຫຍດທາງດ້ານເສດຖະກິດຈະໄດ້ຮັບໂດຍບໍລິສັດ ແລະ ລາຍຮັບດັ່ງກ່າວຕ້ອງສາມາດວັດແທກໄດ້ຢ່າງສົມເຫດສົມຜົນ. ລາຍຮັບຈະຖືກວັດແທກດ້ວຍມູນຄ່າຍຸຕິທຳຂອງລາຍຮັບ ຫຼື ໜີ້ຕ້ອງຮັບທີ່ຖືກພິຈາລະນາ, ໂດຍບໍ່ລວມສ່ວນຫຼຸດທາງການຄ້າ, ການສົ່ງຄືນ ແລະ ການຮັບສິນຄ້າຄືນ. ເງື່ອນໄຂສະເພາະໃນການຮັບຮູ້ ດັ່ງຕໍ່ໄປນີ້ຕ້ອງສອດຄ່ອງກ່ອນລາຍຮັບຈະຖືກຮັບຮູ້:

ການຂາຍສິນຄ້າ

ລາຍຮັບຈະຖືກຮັບຮູ້ເມື່ອຄວາມສ່ຽງອັນໃຫຍ່ຫຼວງ ແລະ ຜົນຕອບແທນຂອງການເປັນເຈົ້າຂອງຕໍ່ສິນຄ້າໄດ້ຖືກໂອນຜ່ານໄປຍັງຜູ້ຊື້, ໂດຍທົ່ວໄປ ແມ່ນອີງຕາມການຂົນສົ່ງສິນຄ້າ.

ດອກເບ້ຍ

ລາຍຮັບຈະຖືກຮັບຮູ້ເມື່ອມີດອກເບ້ຍຄ້າງຮັບ (ໂດຍຄຳນຶງເຖິງປະສິດທິພາບຂອງຊັບສິນ) ເວັ້ນເສຍແຕ່ວ່າມີຂໍ້ສົງໄສໃນການເກັບໜີ້.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ອາກອນ

ອາກອນກຳໄລ ແມ່ນການຄາດຄະເນໜີ້ຕ້ອງສົ່ງອາກອນ ຕາມກຳໄລທີ່ຕ້ອງເສຍອາກອນພາຍໃນປີ, ໂດຍນຳໃຊ້ອັດຕາອາກອນກຳໄລທີ່ປະກາດໃຊ້ນະມື້ຂອງໃບລາຍງານຖານະການເງິນ ແລະ ນຳໃຊ້ໃນໄລຍະຂອງການນຳໃຊ້ບົດລາຍງານ ແລະ ທຸກໆການດັດແກ້ຂອງໜີ້ຕ້ອງສົ່ງອາກອນກຳໄລຂອງປີທີ່ຜ່ານມາ.

ໜີ້ຕ້ອງສົ່ງອາກອນອື່ນໆ ປະກອບມີ ອາກອນມູນຄ່າເພີ່ມ ແລະ ອາກອນລາຍໄດ້ຂອງພະນັກງານ.

ອາກອນມູນຄ່າເພີ່ມແມ່ນອາກອນທີ່ຕ້ອງຈ່າຍໂດຍກຳນົດຈາກລາຍຮັບສຳລັບໄລຍະທີ່ມີການຄິດໄລ່ ໂດຍນຳໃຊ້ອັດຕາອາກອນທີ່ເໝາະສົມພາຍໃນປີ.

ອາກອນລາຍໄດ້ ແມ່ນອາກອນທີ່ຕ້ອງຈ່າຍໃນມູນຄ່າເງິນເດືອນທີ່ຈ່າຍໃຫ້ພະນັກງານຂອງໄລຍະດັ່ງກ່າວ ເຊິ່ງຄິດໄລ່ໂດຍນຳໃຊ້ອັດຕາອາກອນທີ່ເໝາະສົມພາຍໃນປີ.

ທຸກໆການດັດແກ້ທີ່ກ່ຽວກັບມູນຄ່າຂອງອາກອນຕ້ອງຈ່າຍຂອງປີທີ່ຜ່ານມາ ເຊິ່ງມີຜົນມາຈາກການໄລ່ລຽງອາກອນຂອງເຈົ້າໜ້າທີ່ສ່ວຍສາອາກອນແມ່ນໄດ້ບັນທຶກໂດຍກົງໃນກຳໄລສະສົມ.

ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ

ພາກສ່ວນຕ່າງໆຖືກພິຈາລະນາເປັນພາກສ່ວນທີ່ກ່ຽວຂ້ອງ ຖ້າຫາກວ່າ ພາກສ່ວນດັ່ງກ່າວມີຄວາມສາມາດໃນການຄວບຄຸມ ຫຼື ມີອິດທິພົນທີ່ສຳຄັນຕໍ່ກັນ ໃນການຕັດສິນໃຈທາງດ້ານການເງິນ ແລະ ການດຳເນີນງານ ຫຼື ຢູ່ພາຍໃຕ້ການຄວບຄຸມຮ່ວມກັນ ຫຼື ມີອິດທິພົນທີ່ສຳຄັນຮ່ວມກັນ.

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງແມ່ນເກີດຂຶ້ນໂດຍອີງຕາມລາຄາຕະຫຼາດ ຫຼື ອີງຕາມການເຫັນດີ ແລະ ຕົກລົງກັນຕາມສັນຍາໃນກໍລະນີທີ່ບໍ່ມີລາຄາຕະຫຼາດ.

4. ຊັບສິນ, ອາຄານ ແລະ ອຸປະກອນ

	ອາຄານ ແລະ ສິ່ງປຸກສ້າງ ກີບ	*ເຄື່ອງຈັກ ແລະ ອຸປະກອນ ກີບ*	*ພາຫະນະຂົນສົ່ງ ກີບ*	*ການປັບປຸງສິດທິໃນການເຊົ່າ ກີບ*	*ເຄື່ອງໃຊ້ຫ້ອງການ ກີບ*	*ຊັບສິນອື່ນໆ ກີບ*	*ລວມ ກີບ*
ຕົ້ນທຶນ							
ນະວັນທີ 1 ມັງກອນ 2019	134,001,137,634	210,889,233,994	20,188,472,198	1,783,784,625	2,070,067,576	436,983,816	369,369,679,843
ຮັບເຂົ້າໃນປີ	381,178,053	2,308,410,968	1,500,000,000	66,932,638	18,522,000	-	4,275,043,659
ສະສາງອອກ	-	(120,277,200)	-	-	-	-	(120,277,200)
ວັນທີ 31 ທັນວາ 2019	134,382,315,687	213,077,367,762	21,688,472,198	1,850,717,263	2,088,589,576	436,983,816	373,524,446,302
ຄ່າຫຼ້ຍຫ້ຽນສະສົມ							
ນະວັນທີ 1 ມັງກອນ 2019	109,359,010,788	208,534,469,784	19,274,069,995	1,499,652,140	1,938,522,182	436,983,816	341,042,708,705
ຫັກຄ່າຫຼ້ຍຫ້ຽນໃນປີ	6,603,922,148	1,659,684,263	181,448,440	81,591,327	95,874,524	-	8,622,520,702
ສະສາງອອກ	-	(120,277,200)	-	-	-	-	(120,277,200)
ວັນທີ 31 ທັນວາ 2019	115,962,932,936	210,073,876,847	19,455,518,435	1,581,243,467	2,034,396,706	436,983,816	349,544,952,207
ມູນຄ່າສຸດທິຕາມບັນຊີ							
ວັນທີ 31 ທັນວາ 2018	24,642,126,846	2,354,764,210	914,402,203	284,132,485	131,545,394	-	28,326,971,138
ວັນທີ 31 ທັນວາ 2019	18,419,382,751	3,003,490,915	2,232,953,763	269,473,796	54,192,870	-	23,979,494,095

ຊັບສິນບັດຄົງມູນຄ່າ 21.8 ຕື້ກີບ ຂອງບໍລິສັດໄດ້ຖືກເອົາໄປເປັນຫຼັກຊັບຄ້ຳປະກັນໃນການກູ້ຍືມຕາມທີ່ໄດ້ເປີດເຜີຍໃນບົດອະທິບາຍ ເລກທີ 12.

5. ຊັບສິນພວມກໍ່ສ້າງ

	31 ທັນວາ 2019	*31 ທັນວາ 2018*
	ກີບ	*ກີບ*
ໂຄງການຂຸດຄົ້ນບໍ່ແຮ່ ຄອນພຸກ	4,970,770,178	4,477,967,580
ໂຄງການກໍ່ສ້າງໂຮງງານໄລຍະສອງ	1,409,415,579	2,385,021,904
	6,380,185,757	**6,862,989,484**

6. ຊັບສິນບໍ່ໝຸນວຽນອື່ນໆ

ຊັບສິນບໍ່ໝຸນວຽນອື່ນໆ ແມ່ນສະແດງເປັນມູນຄ່າສຸດທິຂອງທີ່ດິນ ແລະ ເຮືອນ ເຊິ່ງຊື້ໂດຍບໍລິສັດ ແຕ່ຈົດທະບຽນພາຍໃຕ້ຊື່ ທ່ານ ອັນທອງ ສິດທິກຸນ - ອະດີດ ຜູ້ອຳນວຍການໃຫຍ່ຂອງບໍລິສັດ.

7. ຊັບສິນໝຸນວຽນອື່ນໆ

	31 ທັນວາ 2019	*31 ທັນວາ 2018*
	ກີບ	*ກີບ*
ດອກເບ້ຍຄ້າງຈ່າຍຈາກກິດຈະກຳການເງິນ	-	406,155,616
ເງິນລ່ວງໜ້າໃຫ້ພະນັກງານ	116,990,000	128,187,800
ລາຍຈ່າຍລ່ວງໜ້າສຳລັບຄ່າສ້ອມແປງ	1,860,966,996	-
ອື່ນໆ	-	506,194,900
	1,977,956,996	**1,040,538,316**

8. ເຄື່ອງໃນສາງ

	31 ທັນວາ 2019	*31 ທັນວາ 2018*
	ກີບ	*ກີບ*
ວັດຖຸດິບ ແລະ ວັດຖຸສິ້ນເປືອງຕ່າງໆ	9,655,991,450	7,165,325,755
ອຸປະກອນ ແລະ ວັດສະດຸ	11,933,816,385	12,573,847,789
ສິນຄ້າພວມຜະລິດ	13,387,672,609	17,369,090,233
ຜະລິດຕະພັນສຳເລັດຮູບ	4,760,077,562	3,907,764,222
ເງິນແຮສຳລັບເຄື່ອງໃນສາງ	(570,151,756)	(528,194,628)
	39,167,406,250	**40,487,833,371**

9. ໜີ້ຕ້ອງຮັບອື່ນໆ

	31 ທັນວາ 2019	*31 ທັນວາ 2018*
	ກີບ	*ກີບ*
ອາກອນລາຍໄດ້ຕ້ອງຮັບຈາກພະນັກງານ	-	429,622,937
ເງິນມັດຈຳໃຫ້ລູກຄ້າ	113,896,000	-
ອື່ນໆ	142,139,247	354,479,870
	256,035,247	**784,102,807**

10. ໜີ້ຕ້ອງຮັບທາງການຄ້າ

	31 ທັນວາ 2019	*31 ທັນວາ 2018*
	ກີບ	*ກີບ*
ໜີ້ຕ້ອງຮັບທາງການຄ້າ	48,813,383,647	39,706,280,475
ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ	(1,403,773,338)	(1,409,478,342)
	47,409,610,309	**38,296,802,133**

ລາຍລະອຽດຂອງ ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ ນະວັນທີ 31 ທັນວາ 2019 ມີດັ່ງນີ້:

ໄລຍະກາຍກຳນົດ	*ຍອດເຫຼືອໜີ້ຕ້ອງຮັບ*	*ເງິນແຮ*
6 ເດືອນ ຫາ 1 ປີ	407,758,671	122,327,601
ຈາກ 1 ປີ ຫາ 2 ປີ	533,486,160	266,743,080
ຫຼາຍກວ່າ 2 ປີ	1,014,702,657	1,014,702,657
ລວມ	**1,955,947,488**	**1,403,773,338**

ລາຍລະອຽດຂອງເງິນແຮສຳລັບໜີ້ຕ້ອງຮັບທວງຍາກ ນະວັນທີ 31 ທັນວາ 2018 ມີດັ່ງນີ້:

ໄລຍະກາຍກຳນົດ	*ຍອດເຫຼືອໜີ້ຕ້ອງຮັບ*	*ເງິນແຮ*
6 ເດືອນ ຫາ 1 ປີ	930,025,400	279,007,620
ຈາກ 1 ປີ ຫາ 2 ປີ	386,548,200	193,274,100
ຫຼາຍກວ່າ 2 ປີ	937,196,622	937,196,622
ລວມ	**2,253,770,222**	**1,409,478,342**

11. ເງິນສົດ

	31 ທັນວາ 2019 *ກີບ*	*31 ທັນວາ 2018* *ກີບ*
ເງິນສົດໃນຄັງ	185,293,682	467,368,462
ເງິນຝາກທະນາຄານ	5,856,750,080	5,782,044,070
	6,042,043,762	**6,249,412,532**

12. ເງິນກູ້ຍືມ

ລາຍລະອຽດຂອງ ເງິນກູ້ຍືມໄລຍະສັ້ນທີ່ກູ້ຍືມຈາກທະນາຄານ ນະວັນທີ 31 ທັນວາ 2019 ມີດັ່ງນີ້:

ທະນາຄານ	*ມື້ຄົບກຳນົດ*	*ອັດຕາ ດອກເບ້ຍ ຕໍ່ປີ*	*ການຊຳລະ ດອກເບ້ຍ*	*ຫຼັກຊັບຄ้ำ ປะกัน*	*ສະกุนเงิน*	ມູນຄ່າ
ທະນາຄານ ລາວຈີນ ຈຳກັດ	23 ເມສາ 2020	10%	ລາຍເດືອນ	[*]	ກີບ	4,000,000,000
ທະນາຄານ ລາວຈີນ ຈຳກັດ	25 ພະຈິກ 2020	10%	ລາຍເດືອນ	[*]	ກີบ	4,000,000,000
ລວມ						**8,000,000,000**

[*] ຫຼັກຊັບຄ้ำประกันประกอบมี ที่ดิน, ตึกอาคาร, สาง, โรงงาน และ ຊັບสินอื่นๆ ของบໍລิสัดยู่เมืองอ้งอวง และ แของ อวงจัน.

13. ພັນທະອາກອນ

	31 ທັນວາ 2019 *ກີบ*	*31 ທັນວາ 2018* *ກີบ*
ອากอบต้องสิ่งจากผู้สะหมองต่างประเทด	2,783,888,795	2,602,263,634
ອากอบมูนค่าเพิ่มสิ้นออก	453,028,149	3,209,726,878
หนี้ต้องสิ่งอากอบกำไล (บิดอะทิบาย เลกที่ 24)	479,656,526	876,381,305
ອากอบอื่นๆ	1,739,007,396	1,227,628,909
	5,455,580,866	**7,916,000,726**

14. ຄັງສຳຮອງສະຫວັດດີການ

	2019 *ກີບ*	*2018* *ກີບ*
ນະວັນທີ 1 ມັງກອນ	1,878,498,865	5,380,508,915
ແບ່ງສ່ວນຈາກກຳໄລສະສົມ	43,045,175	860,412,478
ນຳໃຊ້	(417,067,230)	(4,362,422,528)
ນະວັນທີ 31 ທັນວາ	**1,504,476,810**	**1,878,498,865**

15. ໜີ້ຕ້ອງສົ່ງອື່ນໆ

	31 ທັນວາ 2019 *ກີບ*	*31 ທັນວາ 2018* *ກີບ*
ໜີ້ຕ້ອງສົ່ງເງິນປັນຜົນ (*)	13,581,363,960	13,581,539,960
ໜີ້ຕ້ອງສົ່ງອື່ນໆ	178,965,848	164,670,927
	13,760,329,808	**13,746,210,887**

(*) ລາຍລະອຽດຂອງການຈ່າຍເງິນປັນຜົນມີດັ່ງນີ້:

	31 ທັນວາ 2019 *ກີບ*	*31 ທັນວາ 2018* *ກີບ*
ໜີ້ຕ້ອງສົ່ງເງິນປັນຜົນປະຈຳປີ 2016	3,395,146,565	3,395,146,565
ໜີ້ຕ້ອງສົ່ງເງິນປັນຜົນປະຈຳປີ 2015	5,773,056,205	5,773,056,205
ໜີ້ຕ້ອງສົ່ງເງິນປັນຜົນປະຈຳປີ 2014	4,413,161,190	4,413,161,190
	13,581,363,960	**13,581,363,960**

16. ທຶນຈົດທະບຽນຕາມກົດໝາຍທີ່ຖອກແລ້ວ

16.1 ຮຸ້ນ

	31 ທັນວາ 2019		*31 ທັນວາ 2018*	
	ຈຳນວນ	*ມູນຄ່າ (ກີບ)*	*ຈຳນວນ*	*ມູນຄ່າ (ກີບ)*
ຮຸ້ນທີ່ໄດ້ຮັບອະນຸຍາດ				
ຮຸ້ນທີ່ອອກ ແລະ ຖອກແລ້ວ				
ຮຸ້ນສາມັນ	40,004,000	20,002,000,000	40,004,000	20,002,000,000

ວັນທີ 14 ກຸມພາ 2018, ບໍລິສັດໄດ້ຮັບໜັງສືຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ເລກທີ 0008/ສຄຄຊ ອອກໃຫ້ໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ເນື່ອງຈາກວ່າບໍລິສັດໄດ້ສຳເລັດຂັ້ນຕອນ IPO ເຊິ່ງຮຸ້ນຈຳນວນ 12,001,200 ຮຸ້ນ ລາຄາໜ້າບັດ 500 ກີບ/ຮຸ້ນ ແລະ ລາຄາຂາຍຮຸ້ນມູນຄ່າ 2,400 ກີບ/ຮຸ້ນ ໄດ້ຖືກຂາຍອອກ.

ຮຸ້ນທັງໝົດ 40,004,000 ຮຸ້ນຂອງບໍລິສັດ (ພາຍໃຕ້ການເປັນເຈົ້າຂອງ ຂອງ "ຊີມັ່ງລາວ") ຖືກຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບ ນະວັນທີ 2 ມິນາ 2018. ມູນຄ່າໜ້າບັດຂອງແຕ່ລະຮຸ້ນແມ່ນ 500 ກີບ.

ໂຄງຮ່າງການຖືຮຸ້ນຂອງບໍລິສັດ ນະວັນທີ 31 ທັນວາ 2019 ມີດັ່ງນີ້:

ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*ເປີເຊັ້ນ*
ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກ ຢຸນນານ ສປ ຈີນ (CYC)	14,280,000	36%
ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	13,720,000	34%
ບໍລິສັດ ມະຫາຊົນ ແລະ ນັກລົງທຶນ ອື່ນໆ	12,004,000	30%
	40,004,000	**100%**

16.2 ເງິນປັນຜົນ

	31 ທັນວາ 2019 *ກີບ*	*31 ທັນວາ 2018* *ກີບ*
ເງິນປັນຜົນຕ້ອງຈ່າຍທ້າຍໃນປີ	**1,200,120,000**	**2,800,279,200**
ເງິນປັນຜົນຂອງຮຸ້ນສາມັນສຳລັບ 2018: 30 ກີບ ຕໍ່ ຮຸ້ນ	1,200,120,000	-
ເງິນປັນຜົນຂອງຮຸ້ນສາມັນສຳລັບ 2017: 63 ກີບ ຕໍ່ ຮຸ້ນ	-	2,800,279,200

17. ລາຍຮັບຈາກການຂາຍສິນຄ້າ

	2019 ກີບ	2018 ກີບ
ຂາຍຊີມັ້ງເປົ່າ	28,386,604,540	37,427,943,321
ຂາຍຊີມັ້ງຜົງ	55,106,875,768	59,983,662,325
	83,493,480,308	**97,411,605,646**

18. ຕົ້ນທຶນຈາກການຂາຍ

	2019 ກີບ	2018 ກີບ
ຂາຍຊີມັ້ງຜົງ	30,738,572,306	31,106,611,294
ຂາຍຊີມັ້ງຝຸ່ນ	62,476,391,902	55,843,495,149
	93,214,964,208	**86,950,106,443**

19. ລາຍຮັບຈາກການດຳເນີນງານອື່ນໆ

	2019 ກີບ	2018 ກີບ
ຂາຍເຫຼັກເສດ	8,180,000	583,172,222
ຄ່າເຊົ່າລົດ	71,787,030	-
ຂາຍຊັບສິມບັດຄົງທີ່	120,277,200	-
ອື່ນໆ	97,326,726	2,239,000
	297,570,956	**585,411,222**

20. ຕົ້ນທຶນຈາກການຂາຍ ແລະ ຈຳໜ່າຍ

	2019 ກີບ	2018 ກີບ
ຕົ້ນທຶນຄ່າຂົນສົ່ງ	376,575,146	156,998,527
ໂບນັດຈາກການຂາຍ	45,000,000	-
ລາຍຈ່າຍໃຫ້ພະນັກງານ	1,246,248,000	1,196,918,175
ລາຍຈ່າຍຄ່າຫຼ້ຽຫ້ຽນ	129,149,044	141,116,122
ຕົ້ນທຶນຈາກການຂາຍ ແລະ ຈຳໜ່າຍອື່ນໆ	819,614,366	1,002,494,352
	2,616,586,556	**2,497,527,176**

21. ລາຍຈ່າຍໃນການດຳເນີນງານ

	2019 ກີບ	2018 ກີບ
ລາຍຈ່າຍໃຫ້ພະນັກງານ	4,622,997,778	3,491,440,633
ລາຍຈ່າຍທາງວິຊາການ	1,659,964,201	1,646,330,129
ຄ່າຫຼຸ້ຍຫ້ຽນ	205,862,432	230,645,080
ລາຍຈ່າຍຄ່າສາທາລະນຸປະໂພກ ແລະ ນ້ຳມັນ	312,708,245	300,021,904
ລາຍຈ່າຍຄ່າເຊົ່າ	348,361,009	209,074,500
ລາຍຈ່າຍຄ່າບຳລຸງຮັກສາ	190,162,750	149,992,299
ລາຍຈ່າຍຄ່າການພິມ ແລະ ເຜີຍແຜ່	365,151,200	412,252,542
ລາຍຈ່າຍຄ່າເດີນທາງ	107,960,690	289,994,900
ຄ່າບຳເນັດ ແລະ ລາຍຈ່າຍອື່ນໆຂອງພະນັກງານ	895,555,546	410,222,307
ລາຍຈ່າຍໃນການບໍລິຫານອື່ນໆ	1,462,287,962	1,593,592,083
	10,171,011,813	**8,733,566,377**

22. ລາຍຮັບທາງການເງິນ

	2019 ກີບ	2018 ກີບ
ລາຍຮັບດອກເບ້ຍເງິນຝາກ	307,493,679	602,443,288
ກຳໄລຈາກອັດຕາແລກປ່ຽນ	161,874,101	387,335,395
	469,367,780	**989,778,683**

23. ລາຍຈ່າຍທາງການເງິນ

	2019 ກີບ	2018 ກີບ
ລາຍຈ່າຍດອກເບ້ຍ	313,333,331	229,244,386
ຂາດທຶນຈາກອັດຕາແລກປ່ຽນ	387,422,524	669,052,542
	700,755,855	**898,296,928**

24. ອາກອນກຳໄລ

ອີງຕາມໃບຢັ້ງຢືນການລົງທຶນ ສະບັບປັບປຸງ ວັນທີ 17 ພະຈິກ 1998, ບໍລິສັດແມ່ນຈະຖືກຍົກເວັ້ນອາກອນກຳໄລສຳລັບສີ່ປີເລີ່ມຈາກປີທຳອິດທີ່ໄດ້ຮັບກຳໄລ ແລະ ຈະຫຼຸດລົງ 50% ຂອງອາກອນກຳໄລທີ່ປະກາດໃຊ້ສຳລັບສອງປີຖັດໄປ. ບໍລິສັດມີພັນທະໃນການຈ່າຍອາກອນກຳໄລໃນອັດຕາ 20% ຫຼັງຈາກໄລຍະເວລາຂໍອະນຸຍາດຫຼຸດອາກອນ. ຜົນກຳໄລປີທຳອິດ ແມ່ນທ້າຍປີການບັນຊີ ນະວັນທີ 31 ທັນວາ 2005.

ບໍລິສັດ ໄດ້ຈົດທະບຽນກັບຕະຫຼາດຫຼັກຊັບລາວນັບແຕ່ 2 ມີນາ 2018. ອີງຕາມໜັງສືແຈ້ງການເລກທີ 2618/ກສອ ລົງວັນທີ 4 ມິຖຸນາ 2018 ຈາກກະຊວງ ການເງິນ, ບໍລິສັດ ໄດ້ຮັບອະນຸຍາດໃຫ້ຫຼຸດອາກອນກຳໄລ 5% ຈາກອັດຕາອາກອນປົກກະຕິ ສຳລັບ ຫ້າ ປີທຳອິດຈາກປີ 2018 ຫາ 2021. ຫຼັງຈາກ, ບໍລິສັດມີພັນທະໃນການຈ່າຍອາກອນກຳໄລໃນອັດຕາ 20%. ດັ່ງນັ້ນ ອາກອນກຳໄລຂອງບໍລິສັດສຳລັບປີ 2019 ຈະຖືກຈ່າຍໃນອັດຕາອາກອນກຳໄລ 15%.

ການມອບອາກອນຂອງບໍລິສັດ ແມ່ນຈະຖືກກວດສອບໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ການນຳໃຊ້ກົດໝາຍວ່າດ້ວຍສ່ວຍສາອາກອນ ແລະ ກົດລະບຽບຕ່າງໆມີການຕີຄວາມໝາຍທີ່ແຕກຕ່າງກັນ, ມູນຄ່າທີ່ລາຍງານໃນເອກະສານລາຍງານການເງິນອາດຈະປ່ຽນແປງພາຍຫຼັງເອກະສານລາຍງານການເງິນຖືກກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ.

ໜີ້ຕ້ອງສົ່ງອາກອນພາຍໃນປີແມ່ນອີງຕາມອາກອນກຳໄລຕ້ອງຈ່າຍໃນປີ. ໜີ້ສິນອາກອນພາຍໃນປີຂອງບໍລິສັດຖືກຄິດໄລ່ໂດຍການນຳໃຊ້ອັດຕາອາກອນທີ່ໄດ້ຖືກປະກາດໃຊ້ໃນມື້ອອກໃບລາຍງານຖານະການເງິນ.

ການຄາດຄະເນ ອາກອນກຳໄລກ່ອນຖືກສະແດງຢູ່ຂ້າງລຸ່ມນີ້:

		ສະກຸນເງິນ: ກີບ
	ປີປັດຈຸບັນ	*ປີຜ່ານມາ*
(ຂາດທຶນ)/ກຳໄລກ່ອນຫັກອາກອນ	**(22,479,264,384)**	**567,544,665**
ດັດແກ້ເພື່ອເພີ່ມ/(ຫຼຸດລົງ) ກຳໄລກ່ອນຫັກອາກອນ:		
ເງິນແຮເຄື່ອງໃນສາງ	41,957,128	528,194,628
ເງິນແຮ/(ເກັບຄືນ) ເງິນແຮໜີ້ທວງຍາກ	36,364,996	(660,246,038)
ລາຍຈ່າຍອື່ນໆທີ່ບໍ່ອະນຸຍາດໃຫ້ຫັກ	325,955,403	478,459,482
ຄາດຄະເນອາກອນກຳໄລຕ້ອງມອບໃນໄລຍະ	**(22,074,986,857)**	**913,952,737**
ຄາດຄະເນລ່ວງໜ້າອາກອນກຳໄລພາຍໃນປີໃນອັດຕາ 15 % (2018: 15%)	**-**	**137,092,911**
ອາກອນກຳໄລຕ້ອງຈ່າຍຕົ້ນປີ	876,381,305	1,821,182,892
ອາກອນກຳໄລທີ່ໄດ້ຈ່າຍໃນປີ	(396,724,779)	(1,081,894,498)
ອາກອນກຳໄລຕ້ອງຈ່າຍທ້າຍປີ (ບົດອະທິບາຍ ເລກທີ 13)	**479,656,526**	**876,381,305**

24. ອາກອນກຳໄລ (ຕໍ່)

ຂາດທຶນທາງອາກອນຍົກໄປຫັກຕໍ່

ບໍລິສັດມີສິດທີ່ຈະຍົກຍອດຂາດທຶນທາງອາກອນໄປຫັກລົບກັບລາຍໄດ້ທາງອາກອນພາຍໃນສາມປີຫຼັງຈາກປີທີ່ຂາດທຶນ. ນະວັນທີໃບລາຍງານຖານະການເງິນ, ບໍລິສັດ ມີຂາດທຶນທາງອາກອນສະສົມມູນຄ່າ 22,074,986,857 ກີບ (31 ທັນວາ 2018: ບໍ່ມີ) ທີ່ສາມາດຫັກຕໍ່ກັບລາຍໄດ້ທາງອາກອນ. ລາຍລະອຽດດັ່ງລຸ່ມນີ້:

ສະກຸນເງິນ: ກີບ

ປີທີເລີ່ມຕົ້ນ	*ສາມາດນຳໃຊ້ ຮອດປີ*	*ມູນຄ່າຂາດທຶນທາງ ອາກອນ*	*ສິດທີນຳໃຊ້ຮອດ ວັນທີ 31 ທັນວາ 2019*	*ສິດທີ່ບໍ່ທັນນຳ ໃຊ້ແຕ່ບໍ່ສາມາດ ນຳໃຊ້*	*ສິດທີ່ບໍ່ທັນນຳໃຊ້ ຮອດ ນະວັນທີ 31 ທັນວາ 2019*
2019	2021	22,074,986,857 (*)	-	-	22,074,986,857
ລວມ		**22,074,986,857**	**-**	**-**	**22,074,986,857**

(*) ຂາດທຶນທາງອາກອນຕາມການເປີດເຜີຍອາກອນກຳໄລຂອງບໍລິສັດ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019 ແມ່ນຍັງບໍ່ທັນໄດ້ຮັບການກວດສອບຈາກເຈົ້າໜ້າທີ່ສ່ວຍສາອາກອນທ້ອງຖິ່ນ ນະວັນທີຂອງເອກະສານລາຍງານການເງິນ.

25. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ແມ່ນການປະຕິບັດທາງສັນຍາຕາມລາຄາທີ່ໄດ້ຕົກລົງກັນໄວ້. ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງມີດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*2019 ກີບ*	*2018 ກີບ*
ບໍລິສັດຮ່ວມມືສາກົນດ້ານ ເສດຖະກິດ-ເຕັກນິກ ຢຸນ ນານ ສປ ຈີນ (CYC)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	471,698,190	5,884,865,322
		ລາຍຈ່າຍໃນນາມຂອງ ພາກສ່ວນກ່ຽວຂ້ອງ	-	904,094,371
		ລາຍຈ່າຍໃນການການ ຈັດຊື້ວັດຖຸດິບ	1,504,258,742	5,274,120,254
		ຈ່າຍເງິນປັນຜົນ	428,399,636	899,639,600
		ລາຍຈ່າຍເງິນປັນຜົນ	441,344,929	1,729,440,000
ລັດວິສາຫະກິດ ພັດທະນາ ກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາ ເຂົ້າ (DAI)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	4,839,263,150	10,684,497,409
		ຈ່າຍເງິນປັນຜົນ	411,600,356	864,360,000
		ລາຍຈ່າຍໃນນາມຂອງ ພາກສ່ວນກ່ຽວຂ້ອງ	5,223,098,456	6,686,395,690
		ລາຍຈ່າຍເງິນປັນຜົນ	411,600,356	1,694,160,000
		ຂາຍຊັບສິນບັດຄົງທີ	120,000,000	-

25. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຍອດເຫຼືອໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2019 ແລະ ວັນທີ 31 ທັນວາ 2018 ດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*31 ທັນວາ 2019 ກີບ*	*31 ທັນວາ 2018 ກີບ*
ມູນຄ່າໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ				
ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກ ຢຸນນານ ສປ ຈີນ (CYC)	ຜູ້ຖືຮຸ້ນ	ຈັດຊື້ອັດຖຸດິບ	321,597,680	1,354,158,232
ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	ຜູ້ຖືຮຸ້ນ	ຈັດຊື້ອັດຖຸດິບ	5,578,308,546	5,962,143,852
			5,899,906,226	**7,316,302,084**
ໜີ້ຕ້ອງສົ່ງອື່ນໆ (ບົດອະທິບາຍ ເລກທີ 15)				
ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກ ຢຸນນານ ສປ ຈີນ (CYC)	ຜູ້ຖືຮຸ້ນ	ໜີ້ຕ້ອງສົ່ງເງິນປັນຜົນ	7,736,383,104	7,736,383,104
ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	ຜູ້ຖືຮຸ້ນ	ໜີ້ຕ້ອງສົ່ງເງິນປັນຜົນ	5,844,980,856	5,844,980,856
			13,581,363,960	**13,581,363,960**

ລາຍການເຄື່ອນໄຫວອື່ນໆຂອງພາກສ່ວນທີ່ກ່ຽວຂ້ອງ

ຄ່າຕອບແທນໃຫ້ຄະນະບໍລິຫານພາຍໃນປີມີດັ່ງລຸ່ມນີ້:

	2019 ກີບ	*2018 ກີບ*
ເງິນເດືອນ ແລະ ໂບນັດ	1,193,859,261	2,380,458,404
	1,193,859,261	**2,380,458,404**

26. ການແບ່ງຂໍ້ມູນຕາມພາກສ່ວນ

ກິດຈະກຳຫຼັກຂອງບໍລິສັດທີ່ລະບຸໃນໃບອະນຸຍາດການດຳເນີນທຸລະກິດແມ່ນ ການຜະລິດ ແລະ ຈຳໜ່າຍຊີມັງ ແລະ ຜະລິດຕະພັນຊີມັງອື່ນໆທີ່ກ່ຽວຂ້ອງ. ນອກຈາກນີ້, ກິດຈະກຳເຫຼົ່ານີ້ແມ່ນໄດ້ດຳເນີນທຸລະກິດພາຍໃນ ສປປ ລາວ ເທົ່ານັ້ນ. ດັ່ງນັ້ນ ຄະນະບໍລິຫານຂອງບໍລິສັດ ເຫັນວ່າມີພຽງພາກສ່ວນດຽວສຳລັບທຸລະກິດ ແລະ ພູມສາດເທົ່ານັ້ນ. ສະນັ້ນ, ການນຳສະເໜີການແບ່ງຂໍ້ມູນຕາມພາກສ່ວນແມ່ນບໍ່ມີຄວາມຈຳເປັນ.

27. ເຫດການພາຍຫຼັງວັນທີຂອງໃບລາຍງານຖານະການເງິນ

ບໍ່ໄດ້ມີເຫດການໃດທີ່ສຳຄັນເກີດຂຶ້ນຫຼັງຈາກວັນທີ່ສ້າງໃບລາຍງານຖານະການເງິນ ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນ.

28. ການອະນຸມັດອອກເອກະສານລາຍງານການເງິນ

ເອກະສານລາຍງານການເງິນນະວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ແມ່ນໄດ້ຖືກອະນຸມັດໂດຍຄະນະບໍລິຫານຂອງບໍລິສັດ ໃນວັນທີ 21 ພຶດສະພາ 2020.

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ທ່ານ ຈ່າງ ລີ້
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຢົງຟູ
ຜູ້ຈັດຝ່າຍການບັນຊີ – ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

21 ພຶດສະພາ 2020